ຊົມເຊີຍວັນສິ່ງແວດລ້ອມໂລກ.
ຂຽນໂດຍ ສົມພິດ ພົນສົງຄາມ
ມື້ຈັນທີ່ 15 ມິຖຸນາ 2015 ເວລາ 10: 26 - ແກ້ໄຂລ່າສຸດ ມື້ຈັນທີ່ 06 ກໍລິກົດ 2015 ເວລາ 14: 25

ໃນຕອນເຊົ້າຂອງວັນທີ 11 ມິຖຸນາ 2015 ທີ່ສະໂມສອນ ສະພາ ແຂວງເຊກອງ ພະແນກ
ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແຂວງ ເຊກອງ ໃນນາມເຈົ້າພາບ ໄດ້ຈັດພິທີໂຮມມິດຕິງ
ແລະ ຍ່າງມາລາທອນ ເພື່ອສະເຫຼີມສະຫຼອງວັນສິ່ງແວດລ້ອມໂລກ ວັນທີ 5 ມິຖຸນາ 2015
ໂດຍພາຍໃຕ້ການເປັນປະທານຂອງທ່ານ ຄຳເຜີຍ ບຸດດາວຽງ ເລຂາພັກແຂວງເຈົ້າແຂວງ
ແຂວງເຊກອງ.ໂດຍມີຄະນະປະຈຳພັກແຂວງ,ກຳມະການພັກແຂວງ,ພະນັກງານລັດຖະກອນ,ນັກທຸລະກິດເຂົ້າ
ຮ່ວມຢ່າງເປັນຂະບວນການ,

ໃນນັ້ນ ທ່ານ ບຸນຫຼາຍ ບຸດທິ ກຳມະການພັກແຂວງ ເລຂາໜ່ວຍພັກຮາກຖານ ຫົວໜ້າພະແນກ
ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ໄດ້ຜ່ານສານຂອງພະນະທ່ານ ທອງສິງ ທຳມະວົງ
ນາຍົກລັດຖະມົນຕີແຫ່ງ ສປປ ລາວ ເນື່ອງໃນໂອກາດ ສະເຫຼີມສະຫຼອງ ວັນສິ່ງແວດລ້ອມໂລກ
ພາຍໃຕ້ຄຳຂັວນ ເຈັດຕື້ແຫ່ງຄວາມຝັນ ຢູ່ໃນໂລກດຽວກັນ ພວກເຮົາຈົ່ງພ້ອມກັນນຳໃຊ້
 1 / 2

ຊົມເຊີຍວັນສິ່ງແວດລ້ອມໂລກ.
ຂຽນໂດຍ ສົມພິດ ພົນສົງຄາມ
ມື້ຈັນທີ່ 15 ມິຖຸນາ 2015 ເວລາ 10: 26 - ແກ້ໄຂລ່າສຸດ ມື້ຈັນທີ່ 06 ກໍລິກົດ 2015 ເວລາ 14: 25
ຢ່າງຖະນຸຖະໜອມ.ທ່ານ ບຸນລິດ ສັກບົວວົງ ຄະນະພັກຮາກຖານ ຮອງຫົວໜ້າພະແນກ
ໄດ້ຜ່ານສານຂອງທ່ານ ອາຊິມ ສະໄຕເນີ ຜູ້ອຳນວຍການໃຫຍ່ ອົງການສະຫະປະຊາຊາດ
ເພື່ອສິ່ງແວດລ້ອມ ແລະ ສານຂອງທ່ານ ບັນຄີມູນ ເລຂາທິການໃຫຍ່ ສະມັດຊາໃຫຍ່ ສະຫະປະຊາຊາດ.
 2 / 2